ເຂດການສຶກສາ ເມືອງ ຟິລາແດວເຟັຍ

# ຫ້າມນຳອາວຸດທຸກຊະນິດໄປໂຮງຮຽນ

ກົດໜາຍຂອງຣັຖເພັນໂຊເວເນັຽກຳນົດໄວ້ວ່າ ນັກຮຽນໃດໆກໍ່ຕາມ, ໂດຍບໍ່ຈຳກັດອາຍຸ ຫຼື ລະດັບຊັ້ນຮຽນ, ທີ່ພົບວ່າຄອບຄອງອາວຸດໃດໜຶ່ງໃນເວລາເຂົ້າຮ່ວມຫຼັກສູດ ຫຼື ງານຕ່າງໆ ຂອງໂຮງຮຽນ, ໃນເວລາເດີນທາງໄປ ຫຼື ກັບຈາກໂຮງຮຽນ, ຫຼື ຫຼັກສູດຫຼືງານຕ່າງໆຂອງ ໂຮງຮຽນ (ລວມທັງໃນຣົຖເມໂຮງຮຽນ ຫຼື ຣົຖສາທາຣະນະ) ຈະຖືກຈັບກຸ່ມ ແລະ ໄລ່ອອກ ຈາກເຂດການສຶກສາເປັນເວລາຢ່າງນ້ອຍນຶ່ງປີ.

ກົດໜາຍກຳນົດຢ່າງຈະແຈ້ງສິ່ງທີ່ເປັນອາວຸດ ມີຄື "ມີດທຸກຊະນິດ, ເຄື່ອງຄົມຕ່າງໆ, ເຄື່ອງ ຕັດຕ່າງໆ, ອາວຸດປືນທຸກຊະນິດ, ປືນສັ້ນ, ປືນຍາວ ແລະ ເຄື່ອງມື, ອຸປະກອນ ຫຼື ເຄື່ອງໃຊ້ ອື່ນໆທີ່ສາມາດກໍ່ໃຫ້ເກີດການບາດເຈັບທາງຮ່າງກາຍໄດ້". ກົດໝາຍບໍ່ໄດ້ກຳນົດວ່ານັກຮຽນ ຕ້ອງໄດ້ນຳໃຊ້ ຫຼື ພະຍາຍາມນຳໃຊ້ອາວຸດດັ່ງກ່າວກ່ອນທີ່ຈະມີການຈັບຕົວ ແລະການໄລ່ ອອກໂຮງຮຽນ. ຍິ່ງກວ່ານັ້ນ, ອາວຸດທີ່ຖືມາເພື່ອປ້ອງກັນຕົວເອງກໍ່ບໍ່ຖືກຍົກເວັ້ນຈາກຂໍ້ກຳນົດ ນີ້ຂອງກົດໝາຍ. ອາວຸດທີ່ມີໃນການຄອບຄອງປະກອບມີອາວຸດທີ່ພົບເຫັນໃນຕົວບຸກຄົນ ເຊັ່ນ ດຽວກັນກັບ ໃນກະເປົາປື້ມ, ໃນໂຕະຮຽນ ຫຼືໃນຕູ້ນ້ອຍເຄື່ອງ.